*Souphanouvong University Journal of Multidisciplinary Research and Development*
*2024, Vol. 10, Special Issue, 107-110*
*https://doi.org/10.69692/SUJMRD10special107*

# Development of Lao Writing Skills for Third-Year Kindergarten Students through Whole Language Approach

**Thipkesone MAHALATH*, Soulideth KEOBOUALAPHET, Khanthaly SIDAVONG, Shaidan KHAMPADITH and Vongphiboun VONGPHACHANH**

*Master candidate, Program in Education and Development, faculty of Education Souphanouvong University Lao PDR*

[1]***Correspondence:*** *Thipkesone MAHALATH,* [2]*Department of Education and Sport, Luang Prabang Province*
*Tel: +856 2055191516, Email: thipkesonemahalath1@gmail.com*

***Submitted: December 05, 2024***
***Revised: December 15, 2024***
***Accepted: December 31, 2024***

**Abstract**

This research aims to 1) compare the students' Lao writing skills before and after the Whole Language Approach teaching experience, and 2) study the effectiveness of the Whole Language Approach teaching experience in developing Lao writing skills for kindergarten 3 students at the Khuannakhone Kindergarten-Primary School, Xayaburi District, Xayaburi Province, academic year 2024-2025. The target group for the experiment was selected by convenience without using criteria, namely male and female students aged 5-6 years old who were studying in kindergarten 3, grade 3/1, in the academic year 2024-2025 of the Khuannakhone Kindergarten-Primary School, Xayaburi District, Xayaburi Province, a total of 15 students. The research tools are divided into 2 categories: 1) Experimental tools include a natural language teaching experience plan that focuses on activities that create natural language learning experiences for students, and 2) data collection tools include a Lao writing skills test. The statistics used in the research are the mean, standard deviation, pair sample t-test, and effectiveness index using the SPSS computer program.

The results of the research found that 1) the Lao writing skills for kindergarten 3$^{rd}$ grade students at the Khuannakhone Kindergarten-Primary School, Xayaburi District, Xayaburi Province after the natural language teaching experience is higher than the natural language teaching experience with P-value = 0.000, and 2) the effectiveness of the whole Language approach to develop Lao language writing skills for the kindergarten 3rd grade students is seen to have a good development up to 81.54%.

**Keywords:** *Whole Language Approach, Lao writing skills, kindergarten students*

## 1. ພາກສະເໜີ

ການພັດທະນາເດັກຊັ້ນອະນຸບານສຶກສາ ແມ່ນບາດກ້າວເບື້ອງຕົ້ນທີ່ສຳຄັນໃນການພັດທະນາຊັບພະຍາກອນມະນຸດໃຫ້ມີການຂະຫຍາຍຕົວທາງດ້ານຮ່າງກາຍ, ອະນາໄມ, ຄວາມປອດໄພ, ດ້ານພາສາ, ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ, ດ້ານອາລົມ-ຈິດໃຈ ແລະ ດ້ານສັງຄົມ ເຊິ່ງເປັນພື້ນຖານສາລັບການຮຽນຢູ່ໃນຊັ້ນປະຖົມສຶກສາ ແລະ ໃນຂັ້ນຮຽນຕໍ່ໄປ (ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ, 2012). ການຈັດປະສົບການ ການຮຽນຮູ້ພາສາແມ່ນມີຄວາມສໍາຄັນກັບເດັກຫຼາຍທີ່ສຸດ ເພາະເດັກຕ້ອງສື່ສານກັບຜູ້ອື່ນໃນສັງຄົມພາສາເປັນເຄື່ອງມືໃຫ້ເດັກໄດ້ສະແດງຄວາມຄິດ ຫຼື ສິ່ງທີ່ຕົນເອງຕ້ອງການໃຫ້ຜູ້ອື່ນຮູ້ຜ່ານການເວົ້າ ແລະ ການຂຽນ ເຊິ່ງການສອນພາສາໃຫ້ກັບເດັກນັ້ນຕ້ອງເປັນການສອນພາສາທີ່ມີຄວາມໝາຍກັບເດັກ ຜູ້ສອນຕ້ອງເປັນແບບຢ່າງທີ່ດີທັງການເວົ້າ, ການຟັງ, ການອ່ານ ແລະ ການຂຽນ ເດັກຈຶ່ງຈະສາມາດຮຽນຮູ້ພາສາໄດ້ດີ ແລະ ເດັກຄວນຢູ່ໃນສະພາບແວດລ້ອມທີ່ເຕັມໄປດ້ວຍພາສາທີ່ສື່ຄວາມໝາຍ ມີການຈັດສື່ການສອນເພື່ອໃຫ້ເດັກຮຽນຮູ້ຜ່ານຂະບວນການຫຼິ້ນໄດ້ຢ່າງເປັນທຳມະຊາດທີ່ສຸດ (ສຳນັກວິຊາການແລະມາດຖານການສຶກສາ, 2017).

ການຈັດການສຶກສາໃຫ້ແກ່ເດັກໃນຊັ້ນອະນຸບານ ມີຈຸດປະສົງເພື່ອສົ່ງເສີມໃນທຸກໆດ້ານ ເຊັ່ນ: ດ້ານຮ່າງກາຍມີຮ່າງກາຍຈະເລີນເຕີບໂຕສົມໄວ, ດ້ານອາລົມຮູ້ຈັກປະຕິບັດຕົນດ້ວຍຄວາມສະບາຍ, ມີສຸຂະພາບຈິດທີ່ດີ ແລະ ມີຄວາມສຸກ, ດ້ານສັງຄົມມີນິໄສທີ່ດີໃນການຢູ່ຮ່ວມກັບຜູ້ອື່ນ ແລະ ດ້ານສະຕິປັນຍາມີຄວາມຈື່ຈໍາ, ມີຄວາມຄິດສ້າງສັນ, ມີນິໄສຮັກໃນການຮຽນ - ຫຼິ້ນ ແລະ ສົນໃຈຕໍ່ສິ່ງທີ່ພົບເຫັນ. ເດັກໃນໄວນີ້ເປັນໄວທີ່ມີການຈະເລີນເຕີບໂຕ, ມີການພັດທະນາທຸກໆດ້ານຢ່າງວ່ອງໄວ ປະສົບການທີ່ເດັກໄດ້ຮັບໃນໄລຍະນີ້ຈະເປັນການພັດທະນາຄວາມຮູ້, ຄວາມສາມາດ, ຄວາມຄ່ອງແຄ້ວທີ່ເປັນພື້ນຖານສໍາຄັນໃນການຮຽນຮູ້ ແລະ ການດາລົງຊີວິດໃນອະນາຄົດທີ່ຈະເປັນກໍາລັງສໍາຄັນໃນການພັດທະນາປະເທດຊາດ ແລະ ເປັນຜູ້ໃຫຍ່ທີ່ດີໃນອະນາຄົດ (ກົມປະຖົມ ແລະ ອະນຸບານ, 2010). ເວົ້າວ່າ ການຂຽນຕັ້ງແຕ່ເລີ່ມຕົ້ນ ເປັນທັກສະພື້ນຖານທີ່ກ່ຽວກັບການພັດທະນາການອ່ານອອກຂຽນໄດ້ຂອງເດັກນ້ອຍ ແລະ ຜົນສໍາເລັດທາງການຮຽນໃນການອ່ານ ແລະ ການຂຽນໃນພາຍຫຼັງການກວດສອບທັກສະການຂຽນຂອງເດັກໃນຊ່ວງເລີ່ມຕົ້ນ ໂດຍສະເພາະຢ່າງຍິ່ງສໍາລັບຜູ້ທີ່ຖືກລະບຸວ່າມີຄວາມສ່ຽງຕໍ່ບັນຫາການອ່ານອອກຂຽນໄດ້ພາຍຫຼັງ ມີຄວາມສໍາຄັນຢ່າງຍິ່ງໃນການທໍາຄວາມເຂົ້າໃຈຄວາມແຕກຕ່າງທີ່ອາດຈະເກີດຂຶ້ນໃນການຂຽນຊ່ວງທໍາອິດ ຂອງເດັກເຫຼົ່ານີ້ ແລະ ສະໜັບສະໜູນຄວາມຕ້ອງການຂອງເດັກໃນຂະນະທີ່ທັກສະການຂຽນຂອງພວກເຂົາພັດທະນາດີຂຶ້ນ (Thomas et al., 2020).

ນອກຈາກນີ້ ການຂຽນຍັງຕ້ອງໃຊ້ສະມາທິຢ່າງສູງ ແລະ ມີຊ່ວງຄວາມສົນໃຈນານພໍສົມຄວນ ເພາະເດັກຈະຕ້ອງໄດ້ໃຊ້ສາຍຕາສັງເກດຢ່າງລະອຽດ ເພື່ອແຍກແຍະຕົວພະຍັນຊະນະແຕ່ລະຕົວທີ່ມີຄວາມແຕກຕ່າງກັນ ຈຶ່ງເປັນການຍາກທີ່ຈະສອນໃຫ້ເດັກໃນໄວອະນຸບານ

ສາມາດຂຽນໄດ້ໃນທັນທີ ເພາະພັດທະນາການທາງດ້ານການຂຽນຍັງບໍ່ດີພໍ, ການບັງຄັບໃຫ້ເດັກຂຽນໄດ້ໄວເກີນໄປໂດຍທີ່ເດັກຍັງບໍ່ມີຄວາມພ້ອມເຮັດໃຫ້ເດັກຂຽນໄດ້ບໍ່ງາມ ຫຼື ບໍ່ຖືກຕ້ອງ ແລະ ການເລັ່ງໃຫ້ເດັກຂຽນໃນຂະນະທີ່ຍັງບໍ່ມີຄວາມພ້ອມນັ້ນຈະເກີດຜົນເສຍຂຶ້ນກັບເດັກຕື່ມອີກ (Strickland & Morrow, 1989).

ການສອນພາສາແບບທຳມະຊາດ (Whole Language Approch) ເປັນວິທີການໜຶ່ງໃນການສົ່ງເສີມພັດທະນາການທາງພາສາທີ່ເໝາະສົມກັບພັດທະນາການ ແລະ ຄວາມສົນໃຈຂອງເດັກໃນລະດັບຊັ້ນອະນຸບານ (Budwig, 2013), ເຊິ່ງການສອນພາສາແບບທຳມະຊາດນີ້ແມ່ນເກີດຈາກແນວຄິດຂອງນັກການສຶກສາ Goodman (1989) ໂດຍການສອນພາສາແບບທຳມະຊາດ (Whole Language Approach) ເປັນການຈັດສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ເດັກໄດ້ຮຽນຮູ້ ແລະ ສື່ສານເຊິ່ງກັນແລະກັນ, ມີປະຕິສຳພັນດ້ວຍສະຖານະການຕົວຈິງ ແລະ ໄດ້ຮຽນຮູ້ການໃຊ້ພາສາແບບໂດຍລວມ ໂດຍບໍ່ແຍກກິດຈະກຳການອ່ານ, ການຂຽນ, ການເວົ້າ ແລະ ການຟັງອອກຈາກກັນ ເປັນການສ້າງບັນຍາກາດການຮຽນຮູ້ການອ່ານຈາກຜົນງານການຂຽນ, ຮຽນຮູ້ການຂຽນຈາກການອ່ານ, ຮຽນຮູ້ພາສາຈາກສະພາບແວດລ້ອມ, ນິທານ ແລະ ການຮຽນແບບກະຕຸ້ນໃຫ້ເດັກສະແດງການສື່ສານຜ່ານຂະບວນການຄິດຕະຫຼອດເວລາ ແລະ ໃຊ້ພາສາຈາກແຮງຈູງໃຈພາຍໃນ ບໍ່ແມ່ນການຖືກບັງຄັບ, ແຕ່ເປັນການສົ່ງເສີມໃຫ້ເດັກກ້າເວົ້າ, ກ້າອ່ານ ແລະ ກ້າຂຽນ ໂດຍບໍ່ຢ້ານວ່າຈະຖືກ ຫຼື ຜິດ.

ຍ້ອນເຫັນໄດ້ຄວາມສຳຄັນຂອງການພັດທະນາທັກສະການຂຽນຂອງເດັກ ແລະ ຄວາມສອດຄ່ອງຂອງວິທີການສອນພາສາແບບທາມະຊາດ ທີ່ກ່າວມາຂ້າງເທິງນັ້ນ, ຜູ້ຄົ້ນຄ້ວາ ຈິ່ງເກີດມີຄວາມສົນໃຈ ຢາກທົດລອງນຳເອົາການຈັດປະສົບການສອນພາສາແບບທຳມະຊາດ ມາທົດລອງຈັດການຮຽນ-ການສອນໃຫ້ກັບນັກຮຽນຊັ້ນອະນຸບານ 3 ເພື່ອພັດທະນາທັກສະການຂຽນພາສາລາວຂອງເຂົາເຈົ້າ ໂດຍການປຽບທຽບຄະແນນແບບທົດສອບການຂຽນກ່ອນ ແລະ ຫຼັງການຈັດປະສົບການສອນພາສາແບບທຳມະຊາດ ເພື່ອເປັນຂໍ້ມູນ ແລະ ເປັນແນວທາງໃນການພັດທະນາທັກສະການຂຽນໃຫ້ກັບນັກຮຽນໃນຊັ້ນອື່ນໆຕໍ່ໄປ.

ຈຸດປະສົງຂອງການຄົ້ນຄວ້າໃນຄັ້ງນີ້ແມ່ນ 1) ເພື່ອປຽບທຽບດ້ານທັກສະການຂຽນພາສາລາວຂອງເດັກນັກຮຽນ ກ່ອນ ແລະ ຫຼັງການຈັດປະສົບການສອນພາສາແບບທຳມະຊາດ ແລະ 2) ສຶກສາປະສິດທິຜົນຂອງການຈັດປະສົບການສອນພາສາແບບທຳມະຊາດ ເພື່ອພັດທະນາທັກສະການຂຽນພາສາລາວສຳລັບເດັກນັກຮຽນຊັ້ນອະນຸບານ 3 ທີ່ໂຮງຮຽນອະນຸບານ-ປະຖົມຂວັນນະຄອນ ເມືອງໄຊຍະບູລີ, ແຂວງໄຊຍະບູລີ ສົກສຶກສາ 2024-2025.

## 2. ອຸປະກອນ ແລະ ວິທີການ

ການຄົ້ນຄວ້າຄັ້ງນີ້ ເປັນການພັດທະນາທັກສະການຂຽນພາສາລາວ ໃນຊັ້ນອະນຸບານ **3** ໂດຍການຈັດປະສົບການສອນພາສາແບບທຳມະຊາດ ເປັນການຄົ້ນຄວ້າແບບທົດລອງ ເຊິ່ງມີລາຍລະອຽດ ດັ່ງນີ້:

### 2.1 ກຸ່ມເປົ້າໝາຍການທົດລອງ

ກຸ່ມເປົ້າໝາຍໃນການຄົ້ນຄວ້າທົດລອງຄັ້ງນີ້ ແມ່ນນັກຮຽນ ຊັ້ນອະນຸບານ 3 ຫ້ອງ 3/1 ສົກຮຽນ 2024-2025 ຂອງໂຮງຮຽນເອກະຊົນອະນຸບານ-ປະຖົມຂວັນນະຄອນ ເມືອງໄຊຍະບູລີ, ແຂວງໄຊຍະບູລີ ທີ່ມີອາຍຸລະຫວ່າງ 5-6 ປີ ຈຳນວນ 15 ຄົນ ໂດຍການເລືອກກຸ່ມເປົ້າໝາຍແບບເຈາະຈົງ (Purposive Sampling) (Nyimbili, 2022).

### 2.2 ການອອກແບບການຄົ້ນຄວ້າ

ການຄົ້ນຄວ້າຄັ້ງນີ້ ເປັນການຄົ້ນຄວ້າກ່ອນການທົດລອງ (Pre-experimental research) ໂດຍໃຊ້ກຸ່ມເປົ້າໝາຍກຸ່ມດຽວ ບໍ່ມີກຸ່ມຄວບຄຸມ ເຊິ່ງຜູ້ຄົ້ນຄວ້າໄດ້ດຳເນີນການທົດລອງໂດຍໃຊ້ແຜນການຄົ້ນຄວ້າ One-Group Pretest Design.

| | | |
|---|---|---|
| $O_1$ | X | $O_2$ |

$O_1$ ແມ່ນການທົດສອບກ່ອນການທົດລອງ (Pretest)

X ແມ່ນການຈັດປະສົບການສອນພາສາແບບທຳມະຊາດ

$O_2$ ແມ່ນການທົດສອບກ່ອນການທົດລອງ (Postest)

### 2.3 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ

ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າແບ່ງອອກເປັນ 2 ປະເພດຄື:

1) ບົດສອນພາສາລາວ ແບບການຈັດປະສົບການສອນພາສາແບບທຳມະຊາດ 12 ບົດ, ໂດຍໃຊ້ເວລາຂຶ້ນຫ້ອງສອນຈານວນ 4 ອາທິດ, ອາທິດລະ 21 ຊົ່ວໂມງ ລວມເປັນເວລາ 84 ຊົ່ວໂມງ.

2) ແບບທົດສອບທັກສະການຂຽນພາສາລາວ ແບ່ງອອກເປັນ 3 ພາກສ່ວນຄື: ພາກສ່ວນທີ 1 ແມ່ນທົດສອບການຮຽນຂຽນຈາກຕົ້ນແບບ ແລະ ບອກຄວາມໝາຍຂອງຄຳສັບ ມີທັງໝົດ 5 ຂໍ້, ພາກສ່ວນທີ 2 ແມ່ນທົດສອບການຂຽນໂດຍການຈັບຄູ່ຈາກຮູບພາບກັບຄາສັບ ແລະ ບອກຄວາມໝາຍຂອງຄຳສັບ ມີທັງໝົດ 5 ຂໍ້ ແລະ ພາກສ່ວນທີ 3 ແມ່ນຂຽນສະກົດຄຳສັບຈາກຮູບພາບ ແລະ ບອກຄວາມໝາຍຂອງຄາສັບ ມີທັງໝົດ 5 ຂໍ້, ໂດຍການໃຫ້ຄະແນນ ຂໍ້ລະ 2 ຄະແນນ ລວມຄະແນນເຕັມ 10 ຄະແນນ.

### 2.4 ວິທີເກັບກຳຂໍ້ມູນ

ໃນການຄົ້ນຄວ້າຄັ້ງນີ້ ໄດ້ມີວິທີເກັບກາຂໍ້ມູນການຄົ້ນຄວ້າຕາມຂັ້ນຕອນ ດັ່ງນີ້:

ຂັ້ນຕອນທີ 1: ທົດສອບກ່ອນສອນ ໂດຍການຂຽນພາສາລາວຂອງນັກຮຽນ ໂດຍໃຊ້ແບບທົດສອບທີ່ສ້າງຂຶ້ນໃຫ້ນັກຮຽນຂຽນ ແລະ ບັນທຶກຄະແນນໄວ້.

ຂັ້ນຕອນທີ 3: ດຳເນີນການທົດລອງ ໂດຍການສອນພາສາລາວແບບການຈັດປະສົບການສອນພາສາແບບທຳມະຊາດ.

ຂັ້ນຕອນທີ 4: ຫຼັງຈາກຈັດປະສົບການສອນຄົບ 12 ຊົ່ວໂມງແລ້ວ ນຳເອົາແບບທົດສອບຊຸດເກົ່າມາໃຫ້ນັກຮຽນຂຽນອີກຄັ້ງ ແລະ ບັນທຶກຜົນຄະແນນໄວ້

ຂັ້ນຕອນທີ 5: ນຳເອົາຜົນຄະແນນ ກ່ອນ ແລະ ຫຼັງການຈັດປະສົບການສອນພາສາແບບທຳມະຊາດທີ່ບັນທຶກໄວ້ມາປຽບທຽບຜົນຄະແນນເພື່ອຫາຄວາມແຕກຕ່າງ.

### 2.5 ການສ້າງ ແລະ ການຫາຄຸນນະພາບຂອງເຄື່ອງມື

#### 2.5.1 ການສ້າງເຄື່ອງມື

- ສຶກສາຄົ້ນຄວ້າທິດສະດີ, ຫຼັກການ, ເອກະສານ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງກັບການຈັດປະສົບການສອນພາສາແບບທຳມະຊາດສຳລັບເດັກອະນຸບານ ແລະ ແນວທາງໃນການສ້າງແບບທົດສອບທັກສະການຂຽນເພື່ອເປັນພື້ນຖານໃນການສ້າງເຄື່ອງມືໃນການເກັບກຳຂໍ້ມູນ.

- ສ້າງແບບທົດສອບໃຫ້ຄອບຄຸມຕາມຈຸດປະສົງທີ່ຕັ້ງໄວ້ ເພື່ອເປັນເຄື່ອງມືໃນການເກັບຂໍ້ມູນ.

#### 2.5.2 ການຫາຄຸນນະພາບຂອງເຄື່ອງມື

- ນຳຜົນການປະເມີນແບບທົດສອບຈາກຜູ້ຊ່ຽວຊານ ມາຄິດໄລ່ຫາຄ່າຄວາມທ່ຽງຕົງຕາມເນື້ອໃນກັບຈຸດປະສົງຂອງແຜນການສອນ ເຫັນວ່າ ມີຄ່າ IOC ຕັ້ງແຕ່ 0.33 ຂຶ້ນໄປ, ເມື່ອທຽບກັບເກນແລ້ວແບບທົດສອບທີ່ໃຊ້ໄດ້ຕ້ອງມີຄ່າ IOC ຕັ້ງແຕ່ 0.05 ຂຶ້ນໄປ ສະນັ້ນ, ຈຶ່ງເລືອກຂໍ້ທົດສອບຈຳນວນໜຶ່ງຊຶ່ງມີຄ່າ IOC ຕໍ່າກວ່າເກນອອກ ແລະ ເລືອກຂໍ້ສອບທີ່ມີຄ່າ IOC ຕັ້ງແຕ່ 0.66 ຫາ 1.00 ເປັນຂໍ້ສອບທີ່ຢູ່ໃນເກນຄວາມທ່ຽງຕົງຕາມເນື້ອໃນທີ່ໃຊ້ໄດ້ຈຳນວນ 15 ຂໍ້ ມາພິມເປັນສະບັບຮ່າງ.

- ນຳເຈ້ຍຄຳຕອບມາວິເຄາະຫາຄ່າຄວາມຍາກງ່າຍ (p) ແລະ ຄ່າອຳນາດຈຳແນກ (r) ຂອງແບບທົດສອບເປັນລາຍຂໍ້ ແລ້ວຄັດເລືອກຂໍ້ສອບທີ່ມີຄ່າຄວາມຍາກງ່າຍ (p) ຕັ້ງແຕ່ 0.33 - 0.89 ແລະ ຄ່າອຳນາດຈຳ ແນກ (r) ຕັ້ງແຕ່ 0.22 - 0.67, ຈາກນັ້ນ ນຳແບບທົດສອບມາວິເຄາະຫາຄວາມເຊື່ອໝັ້ນທັງສະບັບດ້ວຍວິທີຂອງຄູເດີ-ຣິຊາດສັນ KR-20 ໄດ້ຄ່າຄວາມເຊື່ອໝັ້ນ $r_{tt}$ = 0.74 (Pandey & Pandey, 2015).

### 2.6 ວິທີການວິເຄາະຂໍ້ມູນ

ຜູ້ຄົ້ນຄວ້າໄດ້ດຳເນີນການວິເຄາະຂໍ້ມູນຈາກແບບທົດສອບໂດຍໃຊ້ໂປຣແກມຄອມພິວເຕີສຳເລັດຮູບ ແລະ ແຍກການວິເຄາະຂໍ້ມູນຕາມລັກສະນະຂອງແບບທົດສອບໃນແຕ່ລະຕອນ. ການຄິດໄລ່ຄະແນນຜົນການທົດສອບຂອງເດັກນັກຮຽນ ແມ່ນຄິດໄລ່ຫາຄ່າສະເລ່ຍ (Mean), ຄ່າຜັນປ່ຽນມາດຕະຖານ (Standard Deviation), ການປຽບທຽບ t-test for dependent ແລະ ດັດສະນີປະສິດທິຜົນ ໂດຍໃຊ້ໂປແກຣມສຳເລັດຮູບ SPSS.

## 3. ຜົນໄດ້ຮັບ

### 3.1 ຜົນການປຽບທຽບທັກສະການຂຽນພາສາລາວຂອງເດັກນັກຮຽນກ່ອນ ແລະ ຫຼັງການຈັດປະສົບການສອນພາສາແບບທຳມະຊາດ

ຈາກຜົນການວິເຄາະຂໍ້ມູນ ພົບວ່າ ທັກສະການຂຽນພາສາລາວຂອງເດັກນັກຮຽນຊັ້ນອະນຸບານ 3 ທີ່ໂຮງຮຽນອະນຸບານ-ປະຖົມຂວັນນະຄອນ ເມືອງໄຊຍະບູລີ, ແຂວງໄຊຍະບູລີ ຫຼັງການຈັດປະສົບການສອນພາສາແບບທຳມະຊາດ ແມ່ນສູງກວ່າ ກ່ອນການຈັດປະສົບການສອນພາສາແບບທຳມະຊາດ ດ້ວຍຄ່າ P-value=0.000, ເຊິ່ງປະກອບມີ 3 ດ້ານຄື: ການຂຽນຮຽນແບບຄຳຈາກຕົ້ນແບບ ແລະ ບອກຄວາມໝາຍຂອງຄຳສັບໄດ້, ຂຽນໂດຍການຈັບຄູ່ຈາກຮູບພາບກັບຄຳສັບ ແລະ ບອກຄວາມໝາຍໄດ້ ແລະ ຂຽນສະກົດຄຳສັບຈາກຮູບພາບ ແລະ ບອກຄວາມໝາຍໄດ້, ໂດຍລວມແລ້ວທັງ 3 ດ້ານນີ້ ມີຄະແນນສະເລ່ຍກ່ອນການຈັດປະສົບການສອນພາສາແບບທຳມະຊາດ ເທົ່າກັບ 6.26 ຄະແນນ ແລະ ຄະແນນສະເລ່ຍຫຼັງການຈັດປະສົບການສອນພາສາແບບທຳມະຊາດ ເທົ່າກັບ 9.31 ຄະແນນ.

### 3.2 ປະສິດທິຜົນຂອງການຈັດປະສົບການສອນພາສາແບບທຳມະຊາດ ເພື່ອພັດທະນາທັກສະການຂຽນພາສາລາວສຳລັບເດັກນັກຮຽນຊັ້ນອະນຸບານ 3

ຈາກຜົນການວິເຄາະຂໍ້ມູນ ພົບວ່າ ດັດຊະນີປະສິດທິຜົນ ຂອງການຈັດປະສົບການສອນພາສາລາວແບບທຳມະຊາດ ເພື່ອພັດທະນາທັກສະການຂຽນພາສາລາວ ສຳລັບເດັກນັກຮຽນ ຊັ້ນອະນຸບານ 3 ທີ່ໂຮງຮຽນອະນຸບານ-ປະຖົມຂວັນນະຄອນ ເມືອງໄຊຍະບູລີ, ແຂວງໄຊຍະບູລີ ມີຄ່າ E.I = 0.8154 ໝາຍຄວາມວ່າ ທັກສະການຂຽນພາສາລາວ ສຳລັບເດັກນັກຮຽນ ຊັ້ນອະນຸບານ 3 ທີ່ ໂຮງຮຽນອະນຸບານ-ປະຖົມຂວັນນະຄອນ ເມືອງໄຊຍະບູລີ, ແຂວງໄຊຍະບູລີ ມີການພັດທະນາດີເພີ່ມຂຶ້ນເຖິງ 81.54%.

## 4. ວິພາກຜົນ

### 4.1 ຜົນການປຽບທຽບທັກສະການຂຽນພາສາລາວຂອງເດັກນັກຮຽນກ່ອນ ແລະ ຫຼັງການຈັດປະສົບການສອນພາສາແບບທຳມະຊາດ

ທັກສະການຂຽນພາສາລາວ ຂອງເດັກນັກຮຽນຊັ້ນອະນຸບານ 3 ທີ່ໂຮງຮຽນອະນຸບານ-ປະຖົມຂວັນນະຄອນ ເມືອງໄຊຍະບູລີ, ແຂວງໄຊຍະບູລີ ຫຼັງການຈັດປະສົບການສອນພາສາແບບທຳມະຊາດ ແມ່ນສູງກວ່າກ່ອນການຈັດປະສົບການສອນພາສາແບບທຳມະຊາດ ອັນເນື່ອງມາຈາກຊຸດແຜນການສອນກ່ຽວກັບການຈັດປະສົບການສອນພາສາລາວແບບທຳມະຊາດ ມີການຈັດການຮຽນຮູ້ທີ່ມີຂັ້ນຕອນທີ່ຊັດເຈນ ເຮັດໃຫ້ນັກຮຽນເກີດຄວາມຮູ້ ຄວາມເຂົ້າໃຈ ສາມາດພັດທະນາທັກສະການຂຽນພາສາລາວເຊັ່ນ: ການຂຽນຮຽນແບບຄຳຈາກຕົ້ນແບບ ແລະ ບອກຄວາມໝາຍຂອງຄຳສັບໄດ້, ຂຽນໂດຍການຈັບຄູ່ຈາກຮູບພາບກັບຄຳສັບ ແລະ ບອກຄວາມໝາຍໄດ້ ແລະ ຂຽນສະກົດຄຳສັບຈາກຮູບພາບ ແລະ ບອກຄວາມໝາຍໄດ້ ເຊິ່ງສອດຄ່ອງກັບ ກົມປະຖົມ ແລະ ອະນຸບານ (2010) ໄດ້ກ່າວໄວ້ວ່າ ຂໍ້ມູນຈາກການຄົ້ນຄວ້າຄັ້ງນີ້ພົບວ່າ ການຈັດປະສົບການສອນພາສາແບບທຳມະຊາດ ໄດ້ເຮັດໃຫ້ນັກຮຽນມີຜົນຄະແນນປະເມີນທັກສະການຂຽນດີຂຶ້ນກ່ວາເກົ່າຢ່າງມີຄວາມສຳຄັນທາງສະຖິຕິ ຍັງສອດຄ່ອງກັບ ສຳນັກວິຊາການ ແລະ ມາດຕະຖານການສຶກສາ (2017) ທີ່ໄດ້ອະທິບາຍການຈັດປະສົບການສອນພາສາແບບທຳມະຊາດ ເປັນການຈັດສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ເດັກໄດ້ຮຽນຮູ້ ແລະ ສື່ສານເຊິ່ງກັນແລະກັນ, ມີປະຕິສຳພັນດ້ວຍສະຖານະການຕົວຈິງ ແລະ ໄດ້ຮຽນຮູ້ການໃຊ້ພາສາແບບໂດຍລວມ ແລະ ຍັງສອດຄ່ອງກັບ Goodman (1989) ທີ່ອະທິບາຍການສອນພາສາແບບທຳມະຊາດ ເປັນການຈັດປະສົບການໂດຍບໍ່ແຍກກິດຈະກາການອ່ານ, ການຂຽນ, ການເວົ້າ ແລະ ການຟັງອອກຈາກກັນ. ນອກຈາກນີ້ ການຈັດປະສົບການ ການຮຽນຮູ້ພາສາແມ່ນມີຄວາມສຳຄັນກັບເດັກຫຼາຍທີ່ສຸດ ເພາະເດັກຕ້ອງສື່ສານກັບຜູ້ອື່ນໃນສັງຄົມພາສາເປັນເຄື່ອງມືໃຫ້ເດັກໄດ້ສະແດງຄວາມຄິດ ຫຼື ສິ່ງທີ່ຕົນເອງຕ້ອງການໃຫ້ຜູ້ອື່ນຮູ້ຜ່ານການເວົ້າ ແລະ ການຂຽນ ເຊິ່ງການສອນພາສາໃຫ້ກັບເດັກນັ້ນຕ້ອງເປັນການສອນພາສາທີ່ມີຄວາມໝາຍກັບເດັກ; ສອດຄ່ອງກັບ Klinamnuay et al. (2017) ສຶກສາການພັດທະນາທັກສະດ້ານການຂຽນຂອງເດັກປະຖົມໄວ ໂດຍໃຊ້ສື່ຕາມແນວຄິດການສອນແບບມອນເຕດຊໍຣິ ຊັ້ນອະນຸບານປີທີ 2 ໂຮງຮຽນອະນຸບານວຽງ

ໄຊ ສຳນັກງານເຂດພື້ນທີ່ການສຶກສາປະຖົມສຶກສາຊຽງຣາຍ ເຂດ1 ຜົນການວິໄຈພົບວ່າ: ຫຼັງຈາກຈັດປະສົບການການພັດທະນາທັກສະດ້ານການຂຽນຂອງເດັກປະຖົມໄວໂດຍໃຊ້ສື່ຕາມແນວຄິດການສອນແບບມອນເຕດຊໍຣີ ຊັ້ນອະນຸບານ 2 ມີຄະແນນສະເລ່ຍກ່ອນການຈັດປະສົບການ ຮ້ອຍລະ 51.04 ແລະ ມີຄະແນນສະເລ່ຍຫຼັງຈັດປະສົບການຮ້ອຍລະ 96.66 ພົບວ່າຄະແນນຫຼັງການຈັດປະສົບການສູງກວ່າຄະແນນສະເລ່ຍກ່ອນການຈັດປະສົບການ.

### 3.2 ປະສິດທິຜົນຂອງການຈັດປະສົບການສອນພາສາແບບທຳມະຊາດ ເພື່ອພັດທະນາທັກສະການຂຽນພາສາລາວສຳລັບເດັກນັກຮຽນຊັ້ນອະນຸບານ 3

ດັດຊະນີປະສິດທິຜົນ ຂອງການຈັດປະສົບການສອນພາສາລາວແບບທຳມະຊາດ ເພື່ອພັດທະນາທັກສະການຂຽນພາສາລາວສຳລັບເດັກນັກຮຽນ ຊັ້ນອະນຸບານ 3 ທີ່ ໂຮງຮຽນອະນຸບານ-ປະຖົມຂວັນນະຄອນ ເມືອງໄຊຍະບູລີ, ແຂວງໄຊຍະບູລີ ມີການພັດທະນາດີເພີ່ມຂຶ້ນເຖິງ 81.54% ເຊິ່ງສອດຄ່ອງກັບການອະທິບາຍຂອງ ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ (2012) ທີ່ໄດ້ອະທິບາຍການພັດທະນາເດັກຊັ້ນອະນຸບານສຶກສາ ແມ່ນບາດກ້າວເບື້ອງຕົ້ນທີ່ສຳຄັນໃນການພັດທະນາຊັບພະຍາກອນມະນຸດໃຫ້ມີການຂະຫຍາຍຕົວທາງດ້ານຮ່າງກາຍ, ອະນາໄມ, ຄວາມປອດໄພ, ດ້ານພາສາ, ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ, ດ້ານອາລົມ-ຈິດໃຈ ແລະ ດ້ານສັງຄົມ ເຊິ່ງເປັນພື້ນຖານສຳລັບການຮຽນຢູ່ໃນຊັ້ນປະຖົມສຶກສາ ແລະ ໃນຂັ້ນຮຽນຕໍ່ໄປ ແລະ ຍັງສອດຄ່ອງກັບ Jitoua (2015) ໄດ້ມີຜົນການຄົ້ນຄວ້າຄື ມີປະສິດທິຜົນການຈັດການສຶກສາສູນພັດທະນາເດັກນ້ອຍ ສັງກັດຢູອົງການບໍລິຫານ ແຂວງນົນທະບູລີ ປະເທດໄທ ມີປະສິດທິຜົນຢູ່ໃນລະດັບຫຼາຍ; ແຕ່ແຕກຕ່າງກັບການຄົ້ນຄວ້າຂອງ Vazir & Ismail (2009) ທີ່ໄດ້ສຶກສາກ່ຽວກັບ ການພັດທະນາທັກສະການຂຽນແບບສ້າງສັນຂອງໄວເດັກ ທີ່ປະເທດປາກິດສະຖານ ເຊິ່ງຜົນການວິໄຈພົບວ່າ ແນວທາງປະຕິບັດໃນການສອນ ແລະ ການຮຽນຮູ້ການຂຽນແບບສ້າງສັນໃນປັດຈຸບັນ ເພື່ອການພັດທະນາທັກສະທາງພາສາ ແລະ ການຮູ້ໜັງສື ເຊິ່ງໄດ້ຮັບອິດທິພົນຫຼາຍມາຈາກການທີ່ຄູສາມາດຮັບຮູ້ເຖິງຄວາມຄິດສ້າງສັນ ແລະ ການຂຽນແບບສ້າງສັນຂອງນັກຮຽນໄວເດັກຢ່າງມີປະສິດທິຜົນ ເພື່ອພັດທະນາທັກສະຂອງໄວເດັກໃຫ້ດີຂຶ້ນ.

## 5. ສະຫຼຸບ

1) ທັກສະການຂຽນພາສາລາວ ຂອງເດັກນັກຮຽນຊັ້ນອະນຸບານ 3 ທີ່ໂຮງຮຽນອະນຸບານ-ປະຖົມຂວັນນະຄອນ ເມືອງໄຊຍະບູລີ, ແຂວງໄຊຍະບູລີ ຫຼັງການຈັດປະສົບການສອນພາສາແບບທຳມະຊາດ ແມ່ນແມ່ນສູງກວ່າກ່ອນການຈັດປະສົບການສອນພາສາແບບທຳມະຊາດ

2) ປະສິດທິຜົນຂອງການຈັດປະສົບການສອນພາສາແບບທຳມະຊາດ ເພື່ອພັດທະນາທັກສະການຂຽນພາສາລາວສຳລັບເດັກນັກຮຽນຊັ້ນອະນຸບານ 3 ເຫັນວ່າ ມີການພັດທະນາດີເພີ່ມຂຶ້ນເຖິງ 81.54%.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄ້ວາວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດກັບພາກສ່ວນໃດພາກສ່ວນໜຶ່ງ ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ກົມປະຖົມ ແລະ ອະນຸບານ. (2010). *ແນວທາງຈັດປະສົບການຊັ້ນອະນຸບານສຶກສາ.* ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການກົມປະຖົມ ແລະ ອະນຸບານ.

ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ. (2012). *ຫຼັກສູດຊັ້ນອະນຸບານ.* ນະຄອນຫຼວງວຽງຈັນ: ລັດວິສະຫະກິດໂຮງພິມສຶກສາ.

ສຳນັກວິຊາການແລະມາດຖານການສຶກສາ. (2017). *ຫຼັກສູດການສຶກສາປະຖົມໄວ.* ປະເທດໄທ: ສຳນັກຄະນະກຳມະການການສຶກສາຂັ້ນພື້ນຖານ.

Budwig, N. (2013). *A developmental-functionalist approach to child language*. Psychology Press.

Jitoua, S. (2015). F*actors related to effectiveness educational of children development centers of Sub-district Administrative Organization (SAO).*

Klinamnuay, T., Thanachaikhan, N., & Panyapruek, S. (2017). The development of 2nd grade-preschool students' thai writing skills through using montessori approach-based instructional visual aids in An-ubarn Wiangchai School, Office of Chiangrai Primary Educational Services Area. *Graduate School Journal*, *10*(2), 61-72.

Terrell, T. D. (1977). A natural approach to second language acquisition and learning 1. *The modern language journal*, *61*(7), 325-337.

Strickland, D.S., & Morrow, L.M. (1989). Emerging Literacy: Young Children Learn To Read and Write. United States of America: A division of Simon and Schuster, Inc.

Nyimbili, F. (2022). Types of purposive sampling techniques with their examples and application in qualitative research studies. *British Journal of Multidisciplinary and Advanced Studies*, *5*(1), 90-99.

Vazir, N., & Ismail, S. (2009). Developing creative writing skills in early childhood: A case study from Pakistan. *Journal of educational research*, *12*(2).

Pandey, P., & Pandey, M.M. (2015). *Research Methodology: Tools And Techniques*. Bridge Center. ISBN 978-606-93502-7-0.

Richards, J. C., & Rodgers, T. S. (2014). *Approaches and methods in language teaching*. Cambridge university press.

Goodman, K. S., & Goodman, Y. M. (2013). Learning to read is natural. In *Theory and practice of early reading* (pp. 137-154). Routledge.

Smith, F. (2012). *Understanding reading: A psycholinguistic analysis of reading and learning to read*. Routledge.

Thomas, L. J., Gerde, H. K., Piasta, S. B., Logan, J. A., Bailet, L. L., & Zettler-Greeley, C. M. (2020). The early writing skills of children identified as at-risk for literacy difficulties. *Early Childhood Research Quarterly*, *51*, 392-402.